ASEAN
AUSTRALIA
SMART CITIES
TRUST FUND
Asian Development Bank

Australian Government
Department of Foreign Affairs and Trade

ADB



# ກອງທຶນຮ່ວມມື ອາຊຽນ ອົດສະຕາລີ ເພື່ອ ພັດທະນານະຄອນອັດສະລິຍະ - ຈຸດເລີ່ມຕົ້ນສໍາລັບການຮ່ວມມື

SCAN FOR
DIGITAL VERSION
bit.ly/30NGlcm

**ກອງທຶນຮ່ວມມື ອາຊຽນ ອົດສະຕາລີ ເພື່ອພັດທະນານະຄອນອັດສະລິຍະ (AASCTF) ເປັນຕົວເປີດທາງດ້ານການຮ່ວມມື ໃຫ້ແກ່ ນັກວາງວາງແຜນຜັງເມືອງ ຫຼື ຜູ້ບໍລິຫານຕົວເມືອງ ທີ່ຮັບຜິດຊອບວຽກງານການບໍລິການສາທາລະນາໃນເຂດເທດສະບານ ເພື່ອຊ່ວຍ ບັນລຸໄດ້ວາລະການພັດທະນາ ນະຄອນອັດສະລິຍາ ຂອງອົງການປົກຄອງທ້ອງຖິ່ນ. AASCTF ໃຫ້ການສະໜັບສະໜູນ ແລະ ຄວາມ ຊ່ຽວຊານທາງດ້ານວິຊາການ ເພື່ອອໍານວຍຄວາມສະດວກການທົດລອງ ແນວທາງການແກ້ໄຂບັນຫາດ້ວຍລະບົບ ດີຈີຕອນອັດສະລິຍະ, ອໍານວຍຄວາມສະດວກ ໃນການຈັດກິດຈະກໍາແລກປ່ຽນຄວາມຮູ້, ແລະສະໜອງໂອກາດເພື່ອສ້າງເຄືອຂ່າຍ ແລະຂີດຄວາມສາມາດ.**

## ບັນດານະຄອນສາມາດໄດ້ປະໂຫຍດແນວໃດ ຈາກການສະໜັບສະໜູນຂອງ AASCTF?

ຜ່ານກອງທຶນການຮ່ວມມືດັ່ງກ່າວ, ເຈົ້າໜ້າທີ່ລັດ ທີ່ຮັບຜິດຊອບຈັດຕັ້ງປະຕິບັດໂຄງການທົດລອງນະຄອນອັດສະລິຍາ ຂອງ AASCTF ຈະກາຍເປັນສ່ວນໜຶ່ງ ຂອງເຄືອຂ່າຍເພື່ອນຮ່ວມງານ ທີ່ມຸ້ງໝັ້ນໃນການພັດທະນາ ແລະ ແລກປ່ຽນແນວທາງການແກ້ໄຂ ແລະ ແນວຄວາມຄິດທີ່ດີທີ່ສຸດ ແລະ ລໍ້າໜ້າ ໃຫ້ແກ່ບັນດາ ນະຄອນໃນອາຊຽນ ເພື່ອກາຍເປັນບ່ອນທີ່ໜ້າດຶງດູດ, ໜ້າຢູ່, ແລະ ມີຄວາມທົນທານໄດ້ດີຂຶ້ນກ່ວາເກົ່າ. ນະຄອນທີ່ເຂົ້າຮ່ວມ ໂຄງການ ຈະຖືກເຊີນເຂົ້າຮ່ວມ ສໍາມະນາທາງໄກ, ລວມທັງກອງປະຊຸມ ແລະ ຝຶກອົບຮົມ ກ່ຽວກັບຫົວຂໍ້ກ່ຽວຂ້ອງການພັດທະນານະຄອນອັດສະລິຍະ. ກອງທຶນນີ້ຍັງໄດ້ສະໜອງການເຂົ້າເຖິງ ຊ່ອງທາງອອນໄລ ທີ່ນະຄອນອັດສະລິຍະ ສາມາດແລກປ່ຽນກັບ ກັບສະມາຊິກໃນເຄືອຂ່າຍ ຕໍ່ກັບບັນຫາ ສິ່ງທ້າທາຍ ແລະວິທີທາງແກ້ໄຂ ພ້ອມໄດ້ຮັບການ ສະໜັບສະໜູນຈາກຊ່ຽວຊານທີ່ມີຄວາມຮູ້ ດ້ານການອອກແບບ ແລະກະກຽມກິດຈະກໍາ ແລະ ໂຄງການສາທິດ ທົດລອງ, ນອກຈາກນັ້ນຍັງມີດ້ານອື່ນໆອີກ ດ້ວຍ.



# ກິດຈະກຳສ້າງເຄືອຂ່າຍ



ຈຸດປະສົງສຳຄັນ ແມ່ນເພື່ອແລກປ່ຽນຄວາມຮູ້, ການຮຽນຮູ້ ແລະ ແນວຄວາມຄິດໃໝ່ໆ, AASCTF ໄດ້ເຕົ້າໂຮມເອົາເພື່ອນຮ່ວມງານທັງພາກລັດ ແລະເອກະຊົນ ຈາກບັນດານະຄອນຂອງອາຊຽນ ເຂົ້າຮ່ວມກິດຈະກຳສ້າງເຄືອຂ່າຍ

ຢ່າງກ້ວາງຂວາງ. ໂດຍສອດຄ່ອງຢ່າງໃກ້ສິດກັບສາມຂົງເຂດໜ້າວຽກຫຼັກຂອງກອງທຶນຮ່ວມມື, ບັນດາກິດຈະກຳສ້າງເຄືອຂ່າຍ ແມ່ນແນໃສ່ເສີມສ້າງການຮ່ວມມື, ສ້າງຂີດຄວາມສາມາດ, ອຳນວຍຄວາມສະດວກການຖ່າຍທອດຄວາມຮູ້, ແລະ ປັບປຸງຄືບລະບົບ ຄວາມຄິດການ ໃນການພັດທະນານະຄອນອັດສະລິຍະ.

## ການວາງແນວທາງສອດຄ່ອງກັບຂົງເຂດໜາວຽກຫຼັກຂອງ AASCTF




## ຄາດໝາຍຜົນໄດ້ຮັບຂອງວຽກງານສ້າງເຄືອຂ່າຍ

- ການສ້າງຂີດຄວາມສາມາດ
- ການຖ່າຍທອດຮູບແບບຈັດຕັ້ງປະຕິບັດທີ່ດີທີ່ສຸດ
- ການສ້າງສາຍພົວພັນ
- ການສ້າງເຄືອຂ່າຍໃຫ້ກ້ວາງຂວາງຂຶ້ນ
- ການເພີ່ມພູນຄວາມຄິດທີ່ເປັນລະບົບ
- ການຄຳນຶງເຖິງວັດທະນາທຳຕາງສັງຄົມ

### ສຳລັບນະຄອນ ຈະໄດ້ຫຍັງຈາກກິດຈະກຳສ້າງເຄືອຂ່າຍ?

ໂດຍຜ່ານກິດຈະກຳສ້າງເຄືອຂ່າຍ, ນະຄອນທີ່ເຂົ້າຮ່ວມ:

- ພັດທະນາທັກສະການຮ່ວມມື ແລະການສື່ສານດ້ານວັດທະນາທຳຕ່າງສັງຄົມ;
- ເພີ່ມຄວາມເຂົ້າໃຈກ່ຽວກັບຄວາມຊັບຊ້ອນຂອງການພັດທະນານະຄອນອັດສະລິຍະ;
- ເກັບກ່ຽວປະສົບການຈາກສາກົນ; ແລະ
- ເປັນການຄົ້ນຫາຕະຫຼາດ ແລະໂອກາດໃໝ່ໆ.

### ກິດຈະກຳສ້າງເຄືອຂ່າຍ ຕິດພັນກັບຫຍັງແດ່?

ກິດຈະກຳສ້າງເຄືອຂ່າຍ ຂອງ AASCTF ເລັ່ງເປົ້າໝາຍໃສ່ກຸ່ມທີ່ກ້ວາງຂວາງ ທັງຈາກຂະແໜງການຂອງລັດ, ເອກະຊົນ, ແລະທັງອົງກອນບໍ່ແມ່ນລັດຖະບານ / ບໍ່ຫວັງຜົນກຳໄລ. ແນໃສ່ສ້າງການກະຕຸກຊຸກຍູ້ ເພື່ອແລກປ່ຽນແນວຄວາມຄິດ ແລະຮູບແບບທີ່ດີທີ່ສຸດ ລະຫວ່າງບັນດານະຄອນດ້ວຍກັນ ໃນຂົງເຂດວຽກງານກ່ຽວຂ້ອງກັບການພັດທະນານະຄອນອັດສະລິຍະ, ການຮ່ວມມືພາກລັດ-ເອກະຊົນ, ລວມໄປເຖິງຫຼາຍຫົວຂໍ້ປົ່ນອ້ອມທີ່ສຳຄັນຕ່າງໆ ເຊັ່ນ: ການເອົາສັງຄົມມີສ່ວນຮ່ວມ, ຄວາມສະເໝີພາບຂອງຍິງຊາຍ ກໍ່ຄືການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ, ການຮັບມືຕໍ່ການປ່ຽນແປງຂອງດິນຟ້າອາກາດ ແລະ ຄວາມຍືນຍົງດ້ານສະພາບແວດລ້ອມ.

## ຂະບວນການສ້າງເຄືອຂ່າຍເປັນຄືແນວໃດ?

**ເດືອນ 1-2**

AASCTF ຈະດຳເນີນການສຳຫຼວດເພື່ອປະເມີນຄວາມຕ້ອງການ ເພື່ອກຳນົດເບິ່ງບັນດາສິ່ງທ້າທາຍກ່ຽວກັບວຽກງານດິຈິຕອນ ແລະບູລິມະສິດຂອງນະຄອນອັດສະລິຍະ. ການສຳຫຼວດຈະດຳເນີນເປັນພາສາທ້ອງຖິ່ນຂອງນະຄອນນັ້ນໆ.

**ເດືອນ 2-4**

ພາກສ່ວນຕ່າງໆຈາກນະຄອນທີ່ຖືກຄັດເລືອກເຂົ້າໂຄງການ ຈະຖືກເຊີນເຂົ້າຮ່ວມຫຼັກສູດແນະນຳກ່ຽວກັບນະຄອນອັດສະລິຍະ ແລະກອງປະຊຸມອື່ນໆ ເພື່ອກຳນົດສິ່ງທ້າທາຍ ແລະ ຄວາມສົນໃຈ ກ່ຽວກັບວຽກງານດິຈິຕອນ.

**ເດືອນ 4 ເປັນຕົ້ນໄປ**

ພາກສ່ວນຕ່າງໆຈາກນະຄອນທີ່ຖືກຄັດເລືອກເຂົ້າໂຄງການ ຈະຖືກເຊີນເຂົ້າຮ່ວມກອງປະຊຸມ/ສຳມະນາທາງໄກ ກ່ຽວກັບຫົວຂໍ້ປົ່ນອ້ອມຕ່າງໆ.

### ເຂົ້າຮ່ວມເປັນເຄືອຂ່າຍນະຄອນອັດສະລິຍະ ຂອງ AASCTF

AASCTF ຍິນດີຕ້ອນຮັບບັນດານະຄອນຈາກພາກພື້ນອາຊຽນ ທີ່ສົນໃຈເຂົ້າຮ່ວມໃນກິດຈະກຳສ້າງເຄືອຂ່າຍຂອງພວກເຮົາ. ທ່ານສາມາດສົ່ງອີເມວເຖິງພວກເຮົາໄດ້ທີ່ aasctf@adb.org ຫຼື ສະແກນລະຫັດ ຢູ່ເບື້ອງຊາຍມືຂອງທ່ານ ເພື່ອຕື່ມແບບຟອມອອນໄລ. ກະລຸນາຕິດຕາມຊ່ອງທາງສື່ສັງຄົມຂອງພວກເຮົາ ເພື່ອຮັບຂໍ້ມູນກ່ຽວກັບເຫດການ ແລະຂ່າວສານຕ່າງໆ ຂອງ AASCTF ໄດ້.

eepurl.com/g_U7ZD

AASCTF  bit.ly/30zLuo0  @AASCTF  @AASCTF